# Course: Small Business Management

## week 14 - Professional Small Business Administration

Souphanouvong University, Lao PDR
Stamy OUNPHOUVONG
Stamy@su.edu.la

# ວິຊາ ການບໍລິຫານທຸລະກິດຂະໜາດນ້ອຍ

## ອາທິດທີ່ 14 -ການບໍລິຫານທຸລະກິດຂະໜາດນ້ອຍແບບມືອາຊີບ

ມະຫາວິທະຍາໄລ ສຸພານຸວົງ
ສະຕາມີ ອຸ່ນພູວົງ

# ບົດທີ 11 (Chapter 11 )

## ການບໍລິຫານທຸລະກິດຂະໜາດນ້ອຍແບບມືອາຊີບ

## Professional Small Business Administration

# ທົບທວນຄືນ/Reviews

1. ຍຸກຂອງທຸລະກິດຂະໜາດນ້ອຍສາກົນເປັນແນວໃດ?
2. ລັກສະນະການສ້າງທຸລະກິດໃນຕ່າງປະເທດປະກອບມີຫຍັງແດ່?
3. ຈົ່ງບອກຄວາມໝາຍ ແລະ ຄວາມສຳຄັນຂອງທຸລະກິດລະຫວ່າງປະເທດ?

# 1

# ການບໍລິຫານທຸລະກິດຂະໜາດນ້ອຍແບບມືອາຊີບ

# ການບໍລິຫານທຸລະກິດຂະໜາດນ້ອຍແບບມືອາຊີບ

ການບໍລິຫານທຸລະກິດຂະໜາດນ້ອຍແບບມືອາຊີບກວມເອົາຫົວຂໍ້ທີ່ສໍາຄັນໃນການສ້າງ ແລະ ດໍາເນີນທຸລະກິດໃຫ້ປະສົບຜົນສໍາເລັດຢ່າງຕໍ່ເນື່ອງ ໂດຍຈະມີການສຸມໃສ່ທັກສະ ແລະ ເຄື່ອງມືທີ່ຈໍາເປັນໃນແຕ່ລະຂົງເຂດ.

.......................................

*ເຊິ່ງຈະປະກອບມີດັ່ງຕໍ່ໄປນີ້:*

# 1 ການແນະນຳທຸລະກິດຂະໜາດນ້ອຍ

| | |
|---|---|
| **ເຂົ້າໃຈສະພາບການທຸລະກິດ** | ສຶກສາສະພາບແວດທຸລະກິດ ແລະ ພຶດຕິກຳຂອງຜູ້ບໍລິໂພກ ເພື່ອວາງແຜນທຸລະກິດຂອງທ່ານຢ່າງມີປະສິດທິພາບ |
| **ຮູ້ຈັກກັບລູກຄ້າ** | ສຳຫຼວດຄວາມຕ້ອງການ ແລະ ວິຖີຊີວິດຂອງລູກຄ້າເປົ້າໝາຍ. ເພື່ອພັດທະນາຜະລິດຕະພັນ ແລະ ການບໍລິການທີ່ຕອບສະໜອງຄວາມຕ້ອງການ |
| **ວາງແຜນເພື່ອຄວາມສຳເລັດ** | ກຳນົດວິໄສທັດ, ພາລະກິດ ແລະ ຍຸດທະສາດຂອງທຸລະກິດ. ເພື່ອແຜນທີ່ຊັດເຈນສຳລັບການປະຕິບັດງານ |

2

# ການກະກຽມແຜນທຸລະກິດ

**ເຂົ້າໃຈທຸລະກິດ**

ວິເຄາະອຸດສາຫະກຳ, ຄູ່ແຂ່ງ ແລະ ໂອກາດທາງທຸລະກິດ. ການອອກແບບຍຸດທະສາດທີ່ເຫມາະສົມ

**ກຳນົດແຜນການປະຕິບັດງານ**

ວາງແຜນການຕະຫຼາດ, ການເງິນ, ການດຳເນີນງານ ແລະ ຊັບພະຍາກອນມະນຸດ ເພື່ອເອົານຳເຂົ້າໄປໃນການປະຕິບັດຕົວຈິງ

**ປະເມີນຜົນ ແລະ ປັບປຸງ**

ຕິດຕາມກວດກາ ແລະ ປະເມີນຜົນປະຕິບັດເປັນປົກກະຕິ. ດັດປັບແຜນການເພື່ອສະທ້ອນໃຫ້ເຫັນສະພາບການປ່ຽນແປງ.

# 3 ຍຸດທະສາດການຄຸ້ມຄອງການເງິນ

| | |
|---|---|
| **ການວາງແຜນການເງິນ** | ກະກຽມງົບປະມານ, ກະແສເງິນສົດ ແລະ ການວິເຄາະທາງດ້ານການເງິນ. ຄວບຄຸມ ແລະ ຄຸ້ມຄອງສະພາບຄ່ອງຂອງທຸລະກິດ |
| **ແຫຼ່ງທຶນ** | ພິຈາລະນາແຫຼ່ງທຶນທີ່ເໝາະສົມ. ລວມທັງກອງທຶນສ່ວນບຸກຄົນ, ເງິນກູ້ ແລະ ການຊອກຫາຄູ່ຮ່ວມງານທຸລະກິດ |
| **ການວັດແທກ ແລະ ການຄວບຄຸມຄ່າໃຊ້ຈ່າຍ** | ຕິດຕາມ ແລະ ຄວບຄຸມລາຍຈ່າຍຢ່າງມີປະສິດທິພາບ ເພື່ອສ້າງຄວາມໄດ້ປຽບໃນການແຂ່ງຂັນ |

4

# ເຕັກນິກການຕະຫຼາດ ແລະ ຍີ່ຫໍ້

| | |
|---|---|
| **ໂຄສະນາ ແລະ ປະຊາສໍາພັນ** | ສື່ສານຂໍ້ມູນກ່ຽວກັບຍີ່ຫໍ້ ແລະ ຜະລິດຕະພັນເພື່ອເຂົ້າເຖິງລູກຄ້າເປົ້າຫມາຍ. |
| **ການສຶກສາພຶດຕິກໍາຂອງຜູ້ບໍລິໂພກ** | ເຂົ້າໃຈຄວາມຕ້ອງການຂອງລູກຄ້າ ແລະ ປັດໃຈທີ່ມີຜົນກະທົບຕໍ່ການຕັດສິນໃຈຊື້. |
| **ການນໍາໃຊ້ສື່ອອນໄລນ** | ສ້າງຍຸດທະສາດການຕະຫຼາດດິຈິຕອນທີ່ເຫມາະສົມສໍາລັບທຸລະກິດ. ເພື່ອເຂົ້າເຖິງລູກຄ້າຢ່າງມີປະສິດທິພາບ |

# 5 ການປະຕິບັດຊັບພະຍາກອນມະນຸດ

| | |
|---|---|
| ການຮັບສະໝັກ ແລະ ການຄັດເລືອກ | ຄົ້ນຫາ ແລະ ເລືອກເຟັ້ນບຸກຄະລາກອນທີ່ມີພອນສະຫວັນທີ່ເໝາະສົມກັບວັດທະນະທຳຂອງອົງກອນ. |
| ການພັດທະນາ ແລະ ການຝຶກອົບຮົມ | ລົງທຶນພັດທະນາທ່າແຮງຂອງພະນັກງານ ເພື່ອເພີ່ມທັກສະ ແລະ ຄວາມຊຳນານ |
| ແຮງຈູງໃຈ ແລະ ການມີສ່ວນຮ່ວມ | ສະໜອງການຊົດເຊີຍ ແລະ ຜົນປະໂຫຍດທີ່ເໝາະສົມ ເພື່ອຮັກສາຄຸນນະພາບຂອງພະນັກງານ |

# 6 ໂອກາດສໍາລັບການຂະຫຍາຍທຸລະກິດ ແລະ ການຂະຫຍາຍຕົວ

| | |
|---|---|
| **ລະບົບການຄຸ້ມຄອງ** | ອອກແບບ ແລະ ປັບປຸງຂະບວນການເຮັດວຽກໃຫ້ມີປະສິດທິພາບສູງສຸດ. |
| **ການນໍາໃຊ້ເຕັກໂນໂລຊີ** | ໃຊ້ເຕັກໂນໂລຢີເພື່ອເພີ່ມຜົນຜະລິດ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍໃນການດໍາເນີນງານທີ່ບໍ່ຈໍາເປັນ. |
| **ການຄວບຄຸມຄຸນນະພາບ** | ກວດກາຄຸນນະພາບສິນຄ້າ ແລະ ການບໍລິການເປັນປະຈໍາ. |

# 2

# 8 ກົດເຫຼັກ SMEs ລົ້ມຍັກ

ໃນໂລກທຸລະກິດ, ຫຼາຍຄົນອາດຈະບໍ່ເຊື່ອວ່າທຸລະກິດຂະໜາດນ້ອຍ ທີ່ພວກເຮົາໄດ້ສ້າງດ້ວຍມືຂອງພວກເຮົາເອງຈະສາມາດຕໍ່ສູ້ກັບທຸລະກິດ ແລະ ຍາດແຍ່ງເອົາພື້ນທີ່ຕະຫຼາດ ຈາກທຸລະກິດຂະໜາດໃຫຍ່ໄດ້.

ດ້ວຍຄວາມເຊື່ອທີ່ວ່າ ທຸລະກິດຂະໜາດໃຫຍ່ມີທຸກ ຊັບພະຍາກອນ ລວມທັງທຶນຮອນ, ບຸກຄະລາກອນ, ເທັກໂນໂລຢີ, ການຕະຫຼາດ, ແນວໃດກໍ່ຕາມ, ຜູ້ປະກອບການທຸລະກິດຂະໜາດນ້ອຍ ຫຼື SMEs ກໍ່ບໍ່ທໍ້ຖອຍ ຫຼື ຍອມແພ້.

ເນື່ອງຈາກວ່າໃນສະໜາມຮົບການຄ້າມັນບໍ່ແນ່ນອນສະເຫມີວ່າຜູ້ຊະນະຈະເປັນຜູ້ທີ່ໃຫຍ່ກວ່າທີ່ມີຊັບພະຍາກອນຫຼາຍກວ່າ.

# 1 ສູ້ຮົບໃນສະໜາມຮົບທີ່ທ່ານເປັນຜູ້ຊ່ຽວຊານ

- ຕະຫຼາດທີ່ຍັກຖະນັດເຮົາບໍ່ຄວນເຂົ້າໄປຫຼິ້ນ.
- ຫຼີກຫຼຽງການໃຊ້ກົນລະຍຸດແບບດຽວກັບຍັກ
- ຫັນມາສົນໃຈຈຸດແຂງຂອງເຮົາ
- ເຊັ່ນ ຊອງທາງການຕະຫຼາດແບບການສະແດງສິນຄ້າ ຫຼື ການຕະຫຼາດແບບກອງໂຈມ, ໂດຍຕະຫຼາດດັ່ງກ່າວຍັກບໍ່ຄ່ອຍສົນໃຈ, ເຮົາຈະສ້າງກົນລະຍຸດເຊັ່ນ: ການສ້າງສາຍສຳພັນກັບລູກຄ້າໂດຍກົງ, ການສື່ສານຜ່ານອອນໄລນ໌ແບບໝູ່ເພື່ອນ, ສ້າງສຳພັນທີ່ດີກັບຊຸມຊົນ.

2

# ບໍລິການປະທັບໃຈມັດໃຈລູກຄ້າ

- ທຸລະກິດຂະໜາດນ້ອຍ ຜູ້ປະກອບການມີໂອກາດໃກ້ຊິດກັບລູກຄ້າໄດ້ດີກວ່າ ເພາະບາງທີ່ຜູ້ປະກອບການເປັນຜູ້ໃຫ້ບໍລິການເອງ.
- ມີການສ້າງສາຍສຳພັນແບບເປັນກັນເອງ
- ເຊັ່ນທຸລະກິດຮ້ານເສີມສວຍ

3

# ເຮັດໃຫ້ພໍດີ ບໍ່ຫຼາຍເກີນໄປ ຫຼື ໜ້ອຍເກີນໄປ

- ຄວາມສາມາດໃນການຜະລິດອາດບໍ່ສາມາດຜະລິດໃນປະລິມານຫຼາຍເທົ່າກັບຍັກ.
- ຄວນຜະລິດຕາມຄວາມຕ້ອງການ ຫຼື ການສັ່ງສິນຄ້າຕາມຄວາມຕ້ອງການຂອງລູກຄ້າ

4

# ທຸລະກິດຕ້ອງເກີດຈາກແຮງບັນດານໃຈ

- SMEs ແມ່ນຄົນຕົວນ້ອຍ, ພໍ່ຄ້າຊາວຂາຍທີ່ສ່ວນໃຫຍ່ແມ່ນເລີ່ມຕົ້ນທຸລະກິດ ຈາກສິ່ງທີ່ພວກເຂົາຖະນັດ ຫຼື ສິ່ງທີ່ຮັກ.
- ຍັກຈະເລີ່ມທຸລະກິດດ້ວຍ ການລົງທຶນໃນເຄື່ອງຈັກ, ບຸກຄະລາກອນ, ແຕ່ ທຸລະກິດຂະໜາດນ້ອຍລົງທຶນທາງ **"ໃຈ"** ແລະ **"ທັກສະ"**

5

# ເພີ່ມແຮງກົດດັນ ສ້າງພະລັງຄວາມສຳເລັດ

- ຄົນທີ່ປະສົບຜົນສຳເລັດສ່ວນຫຼາຍ ລ້ວນແຕ່ມີປະຫວັດທີ່ຍາກລຳບາກ ຫຼື ຂາດແຄນໃນໄວເດັກ, ໄລໜຸ່ມສາວ
- ນັກທຸລະກິດຂະໜາດນ້ອຍສ່ວນຫຼາຍຈະມີຄວາມເປັນນັກສູ້

# 6 ປັບປຸງກົນລະຍຸດໃຫ້ວ່ອງໄວ ທັນເຫດການ

- ທຸລະກິດຂະໜາດນ້ອຍມີກົນລະຍຸດການຕະຫຼາດທີ່ມີຄວາມຍືດຍຸ່ນສູງ
- ທຸລະກິດຈຳເປັນທີ່ຈະໃຊ້ວິທີທີ່ເປັນກົນອຸບາຍເຂົ້າມາໃຊ້ຫຼາຍຂຶ້ນ

# ຂັບເຄື່ອນກອງທັບດ້ວຍພະລັງການມີສ່ວນຮ່ວມ

- ທຸລະກິດຂະໜາດໜ້ອຍມີຜູ້ຄົນບໍ່ຫຼາຍ ການວາງແຜນເປົ້າໝາຍຕ່າງໆແມ່ນຂຶ້ນກັບເຈົ້າຂອງກິດຈະການ
- ດັ່ງນັ້ນ, ຄວນປ່ຽນມາເປັນການມີສ່ວນຮ່ວມຂອງທຸກຄົນ ໂດຍສະເພາະພະລັງໜ້ອຍຈາກພະນັກງານພາຍໃນທຸລະກິດ, ວຽກງານຕ່າງໆຈະບັນລຸເປົ້າໝາຍໄວຂຶ້ນ.

8

# ມີເຄືອຂ່າຍທຸລະກິດ ແລະ ພັນທະມິດທີ່ດີ

- ການຮ່ວມຕົວກັນຂອງບັນດາທຸລະກິດຂະໜາດນ້ອຍມີຄວາມຈຳເປັນຕໍ່ການແຂ່ງຂັນກັບທຸລະກິດຂະໜາດໃຫຍ່.
- ສ້າງເຄືອຂ່າຍທຸລະກິດໃນອຸດສາຫະກຳດຽວກັນ.

# 3

# ການບໍລິຫານທຸລະກິດໃຫ້ມີປະສິດທິພາບ

# ເຈົ້າຂອງທຸລະກິດ SMEs ບໍລິຫານທຸລະກິດແນວໃດໃຫ້ມີປະສິດທິພາບ

- ຈັດລຳດັບຄວາມສຳຄັນຂອງວຽກງານ
- ສ້າງ Routine
- ວຽກທີ່ສາມາດໃຊ້ລະບົບອັດຕະໂນມັດເຮັດໄດ້ກໍ່ໃຫ້ລະບົບເຮັດ
- ການມອບໝາຍວຽກໃຫ້ຄົນອື່ນ

# ເຈົ້າຂອງທຸລະກິດ SMEs ບໍລິຫານທຸລະກິດແນວໃດໃຫ້ມີປະສິດທິພາບ

- ພັກຜ່ອນ
- ກໍາຈັດສິ່ງທີ່ເຮັດໃຫ້ເສຍສະມາທິ
- ໃຊ້ເຕັກໂນໂລຊີໃຫ້ເກີດຜົນປະໂຫຍດສູງສຸດ ເຊັ່ນໃຊ້ລະບົບ Google Analytics, Cloud computing, Google AI Platform
- ປະເມີນຂະບວນການເຮັດວຽກຢູ່ຕະຫຼອດ

# 4 ວິທີຢູ່ລອດສຳລັບ SMEs ໃນຍຸກດິຈິຕອນ

1.ສ້າງຖານລູກຄ້າ

2.ສ້າງຜະລິດຕະພັນ ແລະ ການບໍລິການທີ່ມີຄຸນນະພາບ

# 4 ວິທີຢູ່ລອດສຳລັບ SMEs ໃນຍຸກດິຈິຕອນ

3.ເອົາເຕັກໂນໂລຢີມາຊ່ວຍເສີມສ້າງ

4.ມີຄວາມຮັບຜິດຊອບຕໍ່ສັງຄົມ

# ວຽກບ້ານ/Home work

1) ໃຫ້ນັກສຶກສາຂຽນບົດສະທ້ອນ (reflection paper) 1 ໜ້າ, ກ່ຽວກັບລັກສະນະທີ່ສຳຄັນທີ່ສຸດຂອງການບໍລິຫານທຸລະກິດຂະໜາດນ້ອຍທີ່ຮຽນມາ ແລະ ພວກນ້ອງຈະນຳໃຊ້ມັນແນວໃດໃນສະຖານະການຕົວຈິງ.

# Reference


- Thongvanh, S. (2007). *Small Business Management.* published by the Faculty of Economics and Business Management, National University.
- ThaiFranchiseCenter. (2024, June 2). 8 golden rules for SMEs to fail giants. Retrieved from https://www.thaifranchisecenter.com/document/show.php?docuID=1370
- Bangkokbanksme (2024, June 2). How do SMEs business owners manage their business effectively. Retrieved from https://www.bangkokbanksme.com/en/the-big-blue-how-do-smes-manage-their-business-efficiently

# ຂອບໃຈ Thank you